**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຫຼວງພະບາງ
ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ
ແລະ ແກ້ໄຂການລະບາດຂອງພະຍາດ COVID-19

ເລກທີ 530 /ສພກ.ຫຼບ
ລົງວັນທີ 14 / ພຶດສະພາ (05) 2021

# ແຈ້ງການ

**ເຖິງ:** ທ່ານ ເຈົ້ານະຄອນ-ຫຼວງພະບາງ, ເຈົ້າເມືອງ 11 ເມືອງ ພາຍໃນແຂວງຫຼວງພະບາງ.

**ເລື່ອງ:** ເພີ່ມທະວີເຂັ້ມງວດກວດກາບັນດາແຮງງານ, ການເດີນທາງ ເຂົ້າ-ອອກ ແຂວງຫຼວງພະບາງ ຂອງຄົນລາວ-ຄົນຕ່າງປະເທດ ແລະ ດ່ານທີ່ມີຊາຍແດນຕິດຕໍ່ກັບບັນດາແຂວງຕ່າງໆ.

- **ອີງຕາມ:** ຄຳສັ່ງຂອງນາຍົກລັດຖະມົນຕີ, ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ແລະ ຄຳສັ່ງຂອງທ່ານ ເຈົ້າແຂວງຫຼວງພະບາງ, ສະບັບເລກທີ 01/ຈຂ.ຫຼບ, ລົງວັນທີ 24 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມພ້ອມຮອບດ້ານ ເພື່ອຕ້ານພະຍາດ ໂຄວິດ-19.
- **ອີງຕາມ:** ການຕົກລົງເຫັນດີ ໃນກອງປະຊຸມຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ ໂຄວິດ-19 ແຂວງຫຼວງພະບາງ, ຄັ້ງວັນທີ 12 ພຶດສະພາ 2021.

ເພື່ອເປັນການເພີ່ມທະວີຄຸ້ມຄອງ, ກວດກາ ບັນດາແຮງງານ, ການເດີນທາງ ເຂົ້າ-ອອກ ພາຍໃນແຂວງຫຼວງພະບາງ ເວົ້າລວມເວົ້າສະເພາະກໍ່ຄື ເຂົ້າ-ອອກ ບັນດາເມືອງ-ນະຄອນ ເພື່ອຫຼຸດຜ່ອນຄວາມສ່ຽງທີ່ຈະນຳເອົາເຊື້ອພະຍາດ ໂຄວິດ-19 ມາແຜ່ເຊື້ອໃນ ແຂວງຂອງພວກເຮົາ. ສະນັ້ນ, ຄະນະສະເພາະກິດຂັ້ນແຂວງ ຂໍຖືເປັນກຽດແຈ້ງມາຍັງ ທ່ານ ເພື່ອເພີ່ມທະວີການຈັດຕັ້ງປະຕິບັດກວດກາ ດັ່ງນີ້:

**1.** ໃຫ້ຄະນະສະເພາະກິດບັນດາເມືອງ, ນະຄອນ-ຫຼວງພະບາງ, ອົງການປົກຄອງບ້ານ ໃນທົ່ວແຂວງ ເຂັ້ມງວດກວດກາ ບັນດາແຮງງານ, ຄົນລາວ ແລະ ຊາວຕ່າງປະເທດ ທີ່ເດີນທາງເຂົ້າມາ ນະຄອນ-ເມືອງ-ບ້ານ ໃນຂອບເຂດເຂດທີ່ຕົນຮັບຜິດຊອບ ຕ້ອງປະຕິບັດຕາມມາດຕະການ ດັ່ງນີ້:

- ຕ້ອງມີໃບຢັ້ງຢືນກວດຫາເຊື້ອພະຍາດ ໂຄວິດ-19 ດ້ວຍເຄື່ອງກວດ RT-PCR ພາຍໃນ 72 ຊົ່ວໂມງ ກ່ອນການເດີນທາງເຂົ້າມາ.
- ເມື່ອມາເຖິງແຂວງຫຼວງພະບາງຕ້ອງໄດ້ກວດຊອກຫາເຊື້ອ ໂຄວິດ-19 ດ້ວຍເຄື່ອງ RT-PCR ທີ່ທາງຄະນະສະເພາະກິດຂັ້ນແຂວງກຳນົດໄວ້.
- ຖ້າຜົນກວດເຊື້ອ ໂຄວິດ-19 ດ້ວຍເຄື່ອງ RT-PCR ເປັນຜົນລົບ ແລະ ໃຫ້ສືບຕໍ່ຈຳກັດບໍລິເວນໃນສະຖານທີ່ ທາງຄະນະສະເພາະກິດກຳນົດໄວ້ ຈົນຄົບ 14 ວັນ ແລະກວດຄືນເປັນຄັ້ງທີ 2 ແລ້ວຄະນະສະເພາະກິດຈຶ່ງນຳສົ່ງໃຫ້ອົງການປົກຄອງບ້ານ ແລະ ຄອບຄົວ ສືບຕໍ່ຕິດຕາມ.

2. ເພີ່ມທະວີເປັນເຈົ້າການ ເອົາໃຈໃສ່ກວດກາ ແລະ ສະກັດກັ້ນຄົນລັກລອບ ເຂົ້າ-ອອກ ນະຄອນ-ເມືອງ-ບ້ານ ໂດຍສະເພາະລັກລອບມານໍາລົດບັນທຸກສິນຄ້າ, ລົດຂົນສົ່ງຜັດສະດຸຕ່າງໆ ແລະ ລົດສ່ວນຕົວ ຖ້າພົບເຫັນມີບຸກຄົນລັກລອບເຂົ້າມາ ໃຫ້ກັກໄວ້ຢູ່ສູນກັກກັນ ທີ່ຄະນະສະເພາະກິດໄດ້ກະກຽມໄວ້ (ຫ້າມບໍ່ໃຫ້ເຄື່ອນຍ້າຍ), ຖ້າມີການລະເມີດ ຕ້ອງປະຕິບັດຕາມລະບຽບການຢ່າງເຂັ້ມງວດ ແລະ ລາຍງານໃຫ້ຄະນະສະເພາະກິດ ຂັ້ນແຂວງ (ໜ່ວຍງານປະສານງານ, ເຝົ້າລະວັງ, ວິເຄາະ ແລະ ຈຸດຜ່ານແດນ) ລົງເກັບຕົວຢ່າງ ໃຫ້ທັນເວລາ.

3. ສໍາລັບລົດຂົນສົ່ງສິນຄ້າ, ລົດສ່ວນຕົວ ທີ່ໄດ້ຮັບອານຸຍາດຈາກຄະນະສະເພາະກິດແຕ່ລະແຂວງ ຫຼື ນະຄອນຫຼວງວຽງຈັນ ທີ່ມີຈຸດປະສົງເດີນທາງເຂົ້າມາແຂວງຫຼວງພະບາງ ແມ່ນໃຫ້ປະຕິບັດຕາມແຈ້ງການເລກທີ 242/ຍທ, ລົງວັນທີ 23 ເມສາ 2021 ແລະ ແຈ້ງການເລກທີ 920/ຍທຂ.ຫຼບ, ລົງວັນທີ 05 ພຶດສະພາ 2021, ຖ້າລະເມີດ ໃຫ້ເຈົ້າໜ້າທີ່ປະຈໍາດ່ານ ປະຕິບັດຕາມລະບຽບການ.

4. ໃຫ້ສືບຕໍ່ໂຄສະນາ, ສຶກສາອົບຮົມ ປຸກລະດົມທຸກຊັ້ນຄົນ ເປັນເຈົ້າການ ແລະ ມີສ່ວນຮ່ວມ ຕໍ່ວຽກງານປ້ອງກັນ, ຄວບຄຸມການແຜ່ລະບາດຂອງພະຍາດ ໂຄວິດ-19 ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຖືປະຕິບັດໃຫ້ໄດ້ຮັບຜົນດີ.

**ຮອງເຈົ້າແຂວງຫຼວງພະບາງ**

**ຫົວໜ້າຄະນະສະເພາະກິດ ແກ້ໄຂການລະບາດພະຍາດໂຄວິດ-19**

ແຂວງຫຼວງພະບາງ

ເຈົ້າແຂວງ

ບຸນເລື່ອນ ມະນີວົງ

+ ບ່ອນສົ່ງ:

- ພາກສ່ວນທີ່ກ່ຽວຂ້ອງລະ 01 ສະບັບ
- ສໍານົາ 02 ສະບັບ

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ ໂຄວິດ-19 ແຂວງຫຼວງພະບາງ.